ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າຕ່າງປະເທດ

ເລກທີ 4922 /ກຄຕ

ນະຄອນຫຼວງວຽງຈັນ, ວັນທີ 04 ທັນວາ 2024

# ໜັງສືແຈ້ງເຕືອນ

**ຮຽນ :** ບັນດາບໍລິສັດນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ.

**ເລື່ອງ:** ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມການຄ້າຕ່າງປະເທດ ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ 2080/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 0752/ອຄ, ລົງວັນທີ 23 ພຶດສະພາ 2023;
- ອີງຕາມ ແຈ້ງການດັດສົມຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 2972/ຫອຄ, ລົງວັນທີ 31 ຕຸລາ 2024.

ກົມການຄ້າຕ່າງປະເທດ (ກຄຕ), ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ຜ່ານການຕິດຕາມ-ກວດກາ ໃບຢັ້ງຢືນການລົງທະບຽນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ກົມ ຄຕ ເຫັນວ່າ ໃບຢັ້ງຢືນຂອງຫຼາຍບໍລິສັດ ທີ່ໄດ້ມີການລົງທະບຽນຈຳນວນໜຶ່ງແມ່ນໄດ້ໝົດອາຍຸ ແລະ ຈຳນວນໜຶ່ງແມ່ນກຳລັງຈະໝົດອາຍຸ. ສະນັ້ນ, ກົມ ຄຕ ຈຶ່ງອອກໜັງສືແຈ້ງເຕືອນມາຍັງບໍລິສັດ ທີ່ມີລາຍຊື່ຄັດຕິດມານີ້ ໃຫ້ຮີບຮ້ອນມາຕໍ່ອາຍຸ **ກ່ອນວັນທີ 13 ທັນວາ 2024** ເພື່ອໃຫ້ສືບຕໍ່ດຳເນີນການນຳເຂົ້າສົ່ງອອກໄດ້ປົກກະຕິ.

ການຕໍ່ອາຍຸ ສາມາດດຳເນີນໃນລະບົບການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ບໍລິການ ຜ່ານເວບໄຊສ໌ຂອງກົມການຄ້າຕ່າງປະເທດ https://imex-enterprise.Laoconnect.la/auth/login ໂດຍເອກະສານ ແລະ ເງື່ອນໄຂ ຂອງການຕໍ່ອາຍຸແມ່ນອີງໃສ່ແຈ້ງການດັດສົມຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 2972/ຫອຄ, ລົງວັນທີ 31 ຕຸລາ 2024. ຖ້າບໍລິສັດໃດບໍ່ໄດ້ເຂົ້າລົງທະບຽນຕໍ່ອາຍຸຜ່ານລະບົບດັ່ງກ່າວຕາມກຳນົດເວລາທີ່ໄດ້ລະບຸໄວ້ ແມ່ນທາງກົມ ຄຕ ຈະໄດ້ດຳເນີນການລຶບລ້າງຂໍ້ມູນບໍລິສັດ ແລະ ຈະດຳເນີນການມາດຕະການເພີ່ມເຕີມຕາມລະບຽບທີ່ ກຄຕ ວາງອອກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮ. ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ ກົມການຄ້າຕ່າງປະເທດ

ອ່າງໃຈ ອ່າງ

**ຕິດຕໍ່ພົວພັນ**

ກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ

ພະແນກຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ

ທ່ານ ນາງ ປະລິດາພອນ ພຸດທະວົງ, ເບີໂທ 020 28008333